ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ


**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE


ສໍານັກງານໃຫຍ່

ເລກທີ: 056 /ທຄຕລ.ສພບ.2025
ນະຄອນຫຼວງວຽງຈັນ, ວັນທີ: 10 NOV 2025

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ
### ຄັ້ງທີ 3 ປະຈໍາປີ 2025, ວັນທີ 10/11/2025

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນຄັ້ງທີ 3 ປະຈໍາປີ 2025 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 09:00-12:00 ໂມງ ຂອງວັນທີ 10 ພະຈິກ 2025 ທີ່ສໍານັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈູມຄໍາ ປະທານສະພາບໍລິຫານ. ມີສະມາຊິກສະພາບໍລິຫານຈໍານວນ 08 ທ່ານ ເຂົ້າຮ່ວມ, ມີຄະນະອໍານວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມເປັນຜູ້ສັງເກດການ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຮອງການສະເໜີຂໍກູ້ຢືມຂອງລູກຄ້າບໍລິສັດ 01 ລາຍການ;
2. ຮັບຮອງການກໍານົດລາຄາຂາຍຮຸ້ນ EDL-Gen ທີ່ ທຄຕລ ຖືຄອງຢູ່;
3. ຮັບຊາບລາຍງານຜົນດໍາເນີນທຸລະກິດປະຈໍາໄຕມາດ 3 ປີ 2025 ແລະ ຕົວເລກຜົນດໍາເນີນທຸລະກິດ ຂອງ ທຄຕລ ຮອດເດືອນ 10/2025 (ກ່ອນການກວດສອບ);
4. ຮັບຮອງລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດຫຼັກການ Basel II ແລະ ການປັບປຸງການຈັດຕັ້ງປະຕິບັດແຜນແມ່ບົດຕາມຫຼັກການ Basel II;
5. ຮັບຊາບການລາຍງານວຽກກວດກາພາຍໃນປະຈໍາໄຕມາດ 03/2025;
6. ຮັບຮອງບາງບັນຫາສໍາຄັນທີ່ຕິດພັນກັບການແຕ່ງຕັ້ງສະມາຊິກສະພາບໍລິຫານຊຸດໃໝ່;
7. ຮັບຮອງການແຕ່ງຕັ້ງຕາງໜ້າຜູ້ຖືຮຸ້ນຂອງ ທຄຕລ ຢູ່ບໍລິສັດຮ່ວມທຶນ;
8. ຮັບຮອງການແຕ່ງຕັ້ງພະນັກງານຂັ້ນຮອງຫົວໜ້າສູນຂອງ ທຄຕລ 1 ຕໍາແໜ່ງ;
9. ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານເຂົ້າໃນຄະນະກໍາມະການສະພາບໍລິຫານ.

**ປະທານສະພາບໍລິຫານ**

**ສຸລິວັດ ສຸວັນນະຈູມຄໍາ**


ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA